# ຂ້າມຜ່ານທະເລແດງ



Lesson 6 for August 9, 2025


“ແຕ່ໂມເຊຕອບວ່າ: ຢ່າຢ້ານເລີຍ ຕັ້ງໃຈໃຫ້ດີ ແລະ ພວກເຈົ້າຈະໄດ້ເຫັນສິ່ງທີ່ພຣະເຈົ້າຢາເວ
ກະທຳ ເພື່ອຊ່ວຍພວກເຈົ້າໃຫ້ພົ້ນໃນວັນນີ້ ພວກເຈົ້າຈະບໍ່ເຫັນຊາວເອຢິບເຫລົ່ານີ້ອີກຈັກເທື່ອ,
ພຣະເຈົ້າຢາເວຈະສູ້ຮົບຕາງພວກເຈົ້າ ໂດຍທີ່ພວກເຈົ້າບໍ່ຕ້ອງເຮັດຫຍັງເລີຍ’ ”
ອພຍ 14:13, 14,

ພຣະເຈົ້າຊົງເຕືອນໄວ້ຕັ້ງແຕ່ຕົ້ນວ່າການອົບພະຍົບອອກຈາກເອຢິບ ຈະນຳມາເຊິ່ງຄວາມຕາຍ—ຫລືພົບກັບໄພຄຸກຄາມຂອງຄວາມຕາຍຂອງລູກຊາຍກົກຂອງຟາໂຣ (ອພຍ 4:22-23).



ເພື່ອຫລີກລ້ຽງຄວາມຕາຍ ຂອງລູກຊາຍກົກ, ພຣະເຈົ້າຊົງຂໍໃຫ້ພວກເຂົາກະທຳດ້ວຍຄວາມເຊື່ອ: ນັ້ນກໍ່ຄື ພິທີປັດສະຄາ. ຕອນນີ້ , ພຣະອົງຊົງໄດ້ນຳພວກເຂົາໄປພົບກັບທາງ (ທີ່ປະຊາຊົນເຫັນວ່າເປັນທາງຕັນ), ມັນກໍເຖິງເວລາທີ່ພວກເຂົາຈະຕ້ອງສະແດງຄວາມເຊື່ອ: ເພື່ອທີ່ຈະກ້າວຕໍ່ໄປ.

ຫລັງຈາກຂ້າມທະເລແດງໄປ, ສຸດທ້າຍກໍ່ຫລຸດພົ້ນຈາກການເປັນຂ້າທາດຂອງຊາວເອຢິບ, ພວກເຂົາຈຶ່ງໄດ້ຮ້ອງເປັ່ງສຽງສັນລະເສີນພຣະຜູ້ເປັນເຈົ້າ





ການອົບພະຍົບອອກຈາກເອຢິບ:

- ຈົ່ງຮີບໜີອອກໄປ ! (ອພຍ 12:31-36)
- ການຖວາຍຕົວຂອງລູກຊາຍກົກ (ອພຍ 13:1-16)

ການຂ້າມຜ່ານທະເລແດງ:

- ການຕິດຢູ່ທີ່ທະເລຊາຍ (ອພຍ 13:17-14:12)
- ເສັ້ນທາງໃນທະເລ (ອພຍ 14:13-31)

ການສະຫລອງ:

- ເພງຂອງໂມເຊ (ອພຍ 15:1-21)



# ການ
# ເດີນທາງ
# ອອກຈາກ
# ເອຢິບ



# ຈົ່ງຮີບໜີອອກໄປ

"ຊາວເອຢິບໄດ້ຂໍຮ້ອງໃຫ້ຊົນຊາດນີ້ ໃຫ້ຟ້າວໜີອອກໄປຈາກປະເທດ. ພວກເຂົາໄດ້ເວົ້າວ່າ, ພວກເຮົາຈະຕາຍກັນໝົດ ຖ້າພວກເຈົ້າບໍ່ໜີໄປ!" (ອພຍ 12:33)

ທົ່ວທັງເອຢິບເຕັມໄປດ້ວຍສຽງຮ້ອງໄຫ້, "ເພາະບໍ່ມີບ້ານໃດທີ່ບໍ່ມີຄົນຕາຍ" (ອພຍ. 12:30). ເພາະຟາໂຣອະນຸຍາດໃຫ້ຊົນຊາດອິດສະຣາເອນໜີໄປນັ້ນ ຊ້າເກີນໄປ.

ຟາໂຣບອກ ພ້ອມດ້ວຍຄຳວ່າ "ຂໍຊົງໂຜດອວຍພອນເຮົາດ້ວຍ" (ອພຍ. 12:32), ລາວໄດ້ສະແດງຄວາມຮູ້ສຶກອອກມາ ພ້ອມກັບບອກວ່າ: ຂໍຢ່າໃຫ້ສິ່ງໃດເກີດຂຶ້ນກັບພວກເຮົາອີກເລີຍເທາະ!

ມັນບໍ່ແມ່ນການສະແດງຄວາມເສຍໃຈຢ່າງຊຸດຊຶ້ງແທ້ຈິງ, ແຕ່ເພາະເປັນຄວາມປາຖະໜາຢາກໃຫ້ຫາຍະນະນັ້ນຢຸດລົງ.



ເມື່ອອິດສະຣາເອນຮ້ອງຂໍຄ່າຕອບແທນສຳລັບການຮັບໃຊ້ໃນຫລາຍປີ, ຄົນເອຢິບໄດ້ເອົາໃນສິ່ງທີ່ພວກເຂົາຮ້ອງຂໍໃຫ້" (ອພຍ. 12:36). ສຳລັບການເດີນທາງນັ້ນ, ພຣະອົງຈະຢູ່ກັບພວກເຂົາ, ແລະຊາວອິດສະຣາເອນກໍເຕັມໄປດ້ວຍຊັບສິນ



# ການຖວາຍລູກຊາຍກົກ

“ຈົ່ງອຸທິດຖວາຍລູກຊາຍກົກທຸກຄົນແກ່ເຮົາ, ລູກຊາຍກົກຂອງຊາວອິດສະຣາເອນທຸກໆຄົນ ແລະ ສັດໂຕເຖິກທົ່ວປີທຸກໆໂຕ ເປັນຂອງເຮົາ.” (ອພຍ 13:2)



ລູກຊາຍກົກຈະຖວາຍແບບໃດ?

ພວກເຂົາໄດ້ຮັບການຖວາຍໂດຍຄວາມຕາຍ. ລູກຊາຍກົກທຸກຄົນຈຳເປັນຕ້ອງຕາຍ. ແຕ່ວ່າໄດ້ມີການຈັດຕຽມສິ່ງທີ່ຈະມາແທນລູກຊາຍກົກແລ້ວ, ນັ້ນກໍ່ຄື ໃຫ້ສິ່ງທີ່ມີຊີວິດອື່ນຕາຍແທນພວກເຂົາ.

ໃຫ້ພວກເຮົາຮູ້ວ່າ: ອິດສະຣາເອນ ແມ່ນລູກຊາຍກົກຂອງພຣະເຈົ້າ (ອພຍ. 4:22); ໂບດໃນປະຈຸບັນນີ້ ກໍ່ປຽບເໝືອນອິດສະຣາເອນ ຝ່າຍຈິດວິນຍານ (ຄລຕ. 6:16); ເພາະສະນັ້ນ, ພວກເຮົາທຸກຄົນຈະຕ້ອງຕາຍ ເພື່ອຖວາຍໃຫ້ແກ່ພຣະເຈົ້າ; ແຕ່ວ່າພວກເຮົາມີພຣະເຢຊູ ຜູ້ຊົງສິ້ນພຣະຊົນແທນພວກເຮົາແລ້ວ.





ພຣະເຢຊູ “ລູກແກະຂອງພຣະເຈົ້າ” (ຢຮ. 1:29), ໄດ້ສິ້ນພຣະຊົນ ເພື່ອຜູ້ທີ່ໄດ້ເອົາພຣະໂລຫິດຂອງພຣະອົງທາທີ່ປະຕູຫົວໃຈຂອງພວກເຂົາ ຈະບໍ່ໄດ້ຕາຍ ແຕ່ຈະໄດ້ຊີວິດອັນນິຣັນ

ທາງດ້ານຄວາມລອດ ພຣະເຈົ້າຊົງເຮັດໃນສ່ວນຂອງພຣະອົງແລ້ວ, ພວກເຮົາກໍ່ຄວນເຮັດໃນສ່ວນຂອງພວກເຮົາເຊັ່ນກັນ. ມັນເປັນຄວາມຮັບຜິດຊອບຂອງໂຕເຮົາເອງທີ່ຈະຍອມໃຫ້ຕົນເອງໄດ້ຮັບເຄື່ອງໝາຍການປົກປ້ອງ ໂດຍພຣະໂລຫິດແຫ່ງການໄຖ່ຂອງພຣະອົງ

# ການຂ້າມຜ່ານທະເລແດງ



# ການຕິດຢູ່ທີ່ທະເລຊາຍ

"ແລ້ວກະສັດຟາໂຣ ກໍຈະຄິດວ່າ ຊາວອິດສະຣາເອນກຳລັງເດີນທາງວົນວຽນໄປມາຢູ່ໃນຂົງເຂດນີ້ ໂດຍມີຖິ່ນແຫ້ງແລ້ງກັນດານກີດກັ້ນໄວ້" (ອພຍ 14:3)

ໂດຍການອະນຸຍາດຂອງຟາໂຣ, ອິດສະຣາເອນໄດ້ອອກໄປແລະ "ຕຽມພ້ອມສຳລັບການຕໍ່ສູ້" (ອພຍ. 13:18 ). ແຕ່ພຣະເຈົ້າບໍ່ຢາກໃຫ້ພວກເຂົາພົບກັບສົງຄາມ, ສະນັ້ນ ພຣະອົງຈຶ່ງນຳພາພວກເຂົາໄປອີກທາງໜຶ່ງ (ອພຍ. 13:17).



ໃນຂະນະດຽວກັນ, ຟາໂຣໄດ້ປ່ຽນໃຈ ແລະ ຕິດຕາມຊາວອິດສະຣາເອນໄປ (ອພຍ. 14:5). ດຽວນີ້ຊາວອິດສະຣາເອນໄດ້ຕິດຢູ່ທີ່ຖິ່ນທຸລະກັນດານ (ທະເລແດງ), ເຊິ່ງບໍ່ມີທາງໜີອອກໄປໄດ້ (ອພຍ. 14:2-3, 9).



"ຈົ່ງຈື່ຈຳການອັດສະຈັນທີ່ພຣະເຈົ້າໄດ້ກະທຳ"
(1 ຂ່າວຄາວ. 16:12)

ເພື່ອປະຕິບັດຕາມສັນຍາຂອງໂຢເຊັບກ່ອນເສຍຊີວິດ, ຊາວອິດສະຣາເອນໄດ້ນຳເອົາຫີບໂລງສົບຂອງໂຢເຊັບໄປພ້ອມ (ອພຍ. 13:19). ຍິ່ງໄປກວ່ານັ້ນ, ພຣະເຈົ້າຊົງນຳການເດີນທາງຂອງພວກເຂົາແບບອັດສະຈັນ (ອພຍ. 13:21).



ຢ່າງໃດກໍ່ຕາມ ເມື່ອພວກເຂົາຫລຽວເຫັນກອງທັບຂອງສັດຕູ, ຄວາມເຊື່ອຂອງພວກເຂົາກໍ່ຫລຸດລົງທັນທີ.
(ອພຍ. 14:10-12). ພວກເຂົາລືມປະຕິຫານທີ່ພຣະເຈົ້າຊົງເຮັດ? ແລ້ວ ຖ້າເຫດການຄ້າຍໆກັນນີ້ ເກີດຂຶ້ນກັບພວກເຮົາເດ ພວກເຮົາຈະເຮັດແນວໃດ?





# ເສັ້ນທາງ ໃນທະເລ

"ແຕ່ໂມເຊຕອບວ່າ: ຢ່າຢ້ານເລີຍ ຕັ້ງໃຈໃຫ້ດີ ແລະ ພວກເຈົ້າຈະໄດ້ເຫັນສິ່ງທີ່ພຣະເຈົ້າຢາເວກະທຳ ເພື່ອຊ່ວຍພວກເຈົ້າໃຫ້ພົ້ນໃນວັນນີ້. ພວກເຈົ້າຈະບໍ່ເຫັນຊາວເອຢິບເຫລົ່ານີ້ອີກຈັກເທື່ອ. ພຣະເຈົ້າຢາເວຈະສູ້ຮົບຕາງພວກເຈົ້າ ໂດຍທີ່ພວກເຈົ້າບໍ່ຕ້ອງເຮັດຫຍັງເລີຍ." (ອພຍ 14:13-14)

ເມື່ອພະເຊີນໜ້າກັບປະຊາຊົນທີ່ຄວາມເຊື່ອກຳລັງຫລຸດຖອຍລົງ, ໂມເຊໄດ້ໜູນໃຈພວກເຂົາໃຫ້ເຊື່ອໃນພຣະເຈົ້າ (ອພຍ. 14:13-14):

| | |
|---|---|
| "ຢ່າຢ້ານເລີຍ" | ບາດກ້າວທຳອິດທີ່ຈະຊະນະ ຄືການໄວ້ວາງໃຈໃນພຣະເຈົ້າ |
| "ຈົ່ງຢືນຢັດ" | ພວກເຮົາຕ້ອງອົດທົນຢູ່ ໂດຍບໍ່ຈົ່ມວ່າຕໍ່ພຣະເຈົ້າ |
| "ເບິ່ງຄວາມລອດທີ່ຈະມາເຖິງ" | ຖ້າພວກເຮົາໃຫ້ພຣະເຈົ້ານຳທາງ ໄຊຊະນະມີແນ່ນອນ |
| "ພຣະເຈົ້າຢາເວຈະສູ້ເພື່ອພວກເຈົ້າ" | ພຣະເຈົ້າຊົງສູ້ເພື່ອພວກເຮົາ ຕໍ່ຕ້ານຊາຕານ ແລະ ຄວາມບາບ. ຢູ່ທີ່ເນີນເຂົາຄາວັນຣີ ແມ່ນໜຶ່ງໃນສິ່ງທີ່ພິສູດໃຫ້ພວກເຮົາໄດ້ເຫັນ (ບ່ອນທີ່ພຣະອົງສິ້ນພຣະຊົນ) |



# ເສັ້ນທາງໃນທະເລ

ພຣະອົງມອບຄຳສັ່ງພຽງປະການດຽວໃຫ້ກັບປະຊາຊົນຂອງພຣະອົງ: “ເດີນໜ້າຕໍ່ໄປ” (ອພຍ 14:15). ຈາກສະຖານະການນີ້ຕໍ່ໄປ, ສິ່ງທີ່ເໜືອຄວາມຄາດໝາຍໄດ້ເກີດຂຶ້ນ (ອພຍ 14:19-31):



ທູດສະຫວັນຂອງພຣະເຈົ້າ ແລະ ເສົາເມກ ຕັ້ງຢູ່ລະຫວ່າງຄ້າຍຂອງຊາວອິດສະຣາເອນ ແລະ ຄ້າຍຂອງຊາວເອຢິບ



ໃນຕອນກາງຄືນ ເສົາເມກມືດສຳລັບຊາວເອຢິບ ແລະ ແຈ້ງ ສຳລັບຊາວອິດສະຣາເອນ



ໂມເຊຍົກໄມ້ຄ້ອນເທົ້າຂຶ້ນ ແລະ ທະເລກໍແຍກອອກ ເພື່ອໃຫ້ອິດສະຣາເອນໄດ້ຍ່າງຂ້າມໄປເທິງພື້ນທີ່ແຫ້ງໄດ້.



ອິດສະຣາເອນເຂົ້າໄປໃນທະເລ, ໂດຍມີນ້ຳເປັນກຳແພງກັ້ນທັງດ້ານຂວາ ແລະ ຊ້າຍ



ຊາວເອຢິບກໍເຂົ້າໄປໃນທະເລເຊັ່ນກັນ



ພຣະເຈົ້າໄດ້ເຮັດໃຫ້ພວກເຂົາປັ່ນປ່ວນ



ຂະນະທີ່ພວກເຂົາພະຍາຍາມຖອຍທັບ ທະເລກໍກັບຄືນສູ່ປົກກະຕິ ແລະຖ້ວມທຳລາຍກອງທັບທັງໝົດ



ຈາກຊາຍຝັ່ງ, ອິດສະຣາເອນເຫັນເຖິງໄຊຊະນະ ແລະ ເຊື່ອໃນພຣະເຈົ້າ ແລະ ໂມເຊ



# ການສະເຫລີມ
# ສະຫລອງ



# ເພງຂອງໂມເຊ

“ພວກເຂົາຮ້ອງເພງຂອງໂມເຊຜູ້ຮັບໃຊ້ຂອງພຣະເຈົ້າ ແລະ ເພງຂອງພຣະເມສານ້ອຍນັ້ນວ່າ” (ພນມ 15:3)



ເມື່ອເຫັນສິ່ງທີ່ໄດ້ເກີດຂຶ້ນ, ໂມເຊໄດ້ນຳພາປະຊາຊົນຮ້ອງບົດເພງສັນລະເສີນ, ໃນຂະນະທີ່ມີຣຽມ Miriam ຮ້ອງບົດເພງປະສານສຽງ ພ້ອມກັບຊຸມຜູ້ຍິງ (ອພຍ. 15:1, 20-21).

ໃນບົດເພງນີ້ ບໍ່ມີການກ່າວເຖິງສິ່ງທີ່ອິດສະຣາເອນໄດ້ເຮັດ. ບົດເພງບໍ່ໄດ້ມີພຽງການສັນລະເສີນພຣະເຈົ້າທີ່ຊົງທຳລາຍສັດຕູເທົ່ານັ້ນ (ອພຍ. 15:6), ແຕ່ຍັງເປັນທີ່ຊື່ນຊົມໃນພຣະຣາດສະກິດຂອງອິດສະຣາເອນອີກດ້ວຍ (ອພຍ. 15:11). ປະຕິກິລິຍາໆຂອງຜູ້ທີ່ໄດ້ເຫັນເຖິງເຫດການດັ່ງກ່າວ ໄດ້ປະກາດເຖິງຄວາມຍິ່ງໃຫຍ່ຂອງພຣະເຈົ້າ (ອພຍ. 15:14).





ຍິ່ງໄປກວ່ານັ້ນ, ສິ່ງທີ່ພຣະເຈົ້າໄດ້ຊົງກະທຳ ກໍໄດ້ຮັບການປະກາດໄວ້ວ່າ: “ພຣະອົງຊົງນຳພວກເຂົາເຂົ້າມາໃກ້ ແລະ ຕັ້ງໄວ້ທີ່ພູເຂົາສັກສິດ ບ່ອນທີ່ພຣະເຈົ້າຢາເວໄດ້ສະຖິດຢູ່” (ອພຍ. 15:17).

ເມື່ອການພິພາກສາຂອງພຣະເຈົ້າປາກົດໄດ້ຢ່າງຊັດເຈນ, ຄວາມຊົ່ວ ແລະ ການກົດຂີ່ຂົ່ມເຫັງໄດ້ຖືກກຳຈັດໄປແລ້ວ, ພວກເຂົາຮ້ອງບົດເພງຂອງໂມເຊ ຜູ້ຮັບໃຊ້ຂອງພຣະເຈົ້າ ແລະ ເພງຂອງພຣະເມສານ້ອຍ(ພນມ. 15:3).

“ໃນການປົດປ່ອຍຈິດວິນຍານ, ພຣະເຈົ້າໄດ້ຊົງປະທານການປົດປ່ອຍທີ່ຍິ່ງໃຫຍ່ກວ່າການປົດປ່ອຍທີ່ຊາວເຮັບເຣີໄດ້ຮັບທີ່ທະເລຊາຍນັ້ນ ນັ້ນກໍ່ຄືປົດປ່ອຍຈາກການຕົກຢູ່ພາຍໃຕ້ຄວາມບາບ. ພວກເຮົາຄວນຮ້ອງເພງສັນລະເສີນພຣະອົງ ດ້ວຍຫົວໃຈ ແລະ ດ້ວຍຈິດວິນຍານໃຫ້ແກ່ພຣະອົງ ເພາະ “ພຣະຣາຊກິດອັນອັດສະຈັນທີ່ພຣະອົງໄດ້ກະທຳເພື່ອມະນຸດ.” ຜູ້ທີ່ໄດ້ຄິດເຖິງພຣະເມດຕາອັນຍິ່ງໃຫຍ່ຈະບໍ່ໄດ້ລືມບຸນຄຸນ (ຂອງຂວັນແຫ່ງຄວາມລອດ) ທີ່ພຣະອົງຊົງມອບໃຫ້. ພຣະພອນທີ່ພວກເຮົາຊົງໄດ້ຮັບໃນທຸກໆມື້, ແລະ ເໜືອສິ່ງອື່ນໃດກໍ່ຄືການສິ້ນພຣະຊົນຂອງພຣະອົງ ເພື່ອນຳເອົາຄວາມສຸກ ແລະ ຊີວິດອັນນິຣັນມາສູ່ພວກເຮົາ. ການສັນລະເສີນ, ການເຮັດຕາມນ້ຳພຣະໄທ, ການເຊື່ອ ແລະ ໄວ້ວາງໃຈ ສິ່ງນີ້ຄວນຈະເປັນແກ່ນຂອງຄວາມກະຕັນຍູທີ່ພວກເຮົາຄວນມີໃຫ້ກັບພຣະອົງ”

EGW (Conflict and Courage, March 28)

## ຂໍ້ຄິດເພີ່ມເຕີມ

"ເມື່ອພວກເຮົາເດີນທາງມາຮອດບ່ອນທີ່ເຮົາຄິດວ່າຈະເປັນທາງຕັນ, ບໍ່ມີທາງອອກ ຄືກັບກໍລະນີທີ່ອິດສະຣາເອນເດີນທາງໄປພົບກັບທະເລແດງ ເຊິ່ງບໍ່ມີທາງໄປຕໍ່ໄດ້.
ໃຫ້ພວກເຮົາສືບຕໍ່ມີຄວາມເຊື່ອໃນພຣະອົງ, ໄວ້ວາງໃຈໃນການນຳຂອງພຣະອົງ ແລະ ຮູ້ວ່າ ໄຊຊະນະນັ້ນແມ່ນຢູ່ກັບພຣະອົງ."

ພວກເຮົາທຸກຄົນໄດ້ຮັບຄຳເຊີນຈາກພຣະອົງໃຫ້ມາພັກຢູ່ກັບພຣະອົງ ຜູ້ໃຫ້ຄວາມປອດໄພ ສະນັ້ນຢ່າໃຫ້ພວກເຮົາວິຕົກກັງວົນຫລາຍເກີນໄປ.

ໃຫ້ພຣະເຈົ້າໄດ້ເຮັດໃນສ່ວນທີ່ເປັນຂອງພຣະອົງ, ໃຫ້ພວກເຮົາໃຈເຢັນໆ ແລະ ເບິ່ງວ່າພຣະອົງຈະແກ້ໄຂບັນຫາແບບໃດ ແຕ່ຢ່າລືມວ່າ ທຸກຢ່າງຕ້ອງເປັນໄປຕາມນ້ຳພຣະໄທຂອງພຣະອົງ

ເມື່ອເຮົາຜ່ານອຸປະສັກໄປແລ້ວ ຢ່າລືມຮ້ອງເພງສັນລະເສີນ ແລະ ເລົ່າເຖິງສິ່ງທີ່ພຣະອົງໄດ້ກະທຳເພື່ອເຮົາ